# ກະຊວງແຮງງານ ແລະການພັດທະນາກຳລັງແຮງງານ

## ການປະເມີນການບໍລິການຈ້າງງານໃໝ່ (RESA)

# ການກະກຽມແນະນຳ RESA: ການບໍລິການຂອງສູນຊ່ວຍເຫຼືອອາຊີບ

# ເນື້ອໃນຂອງການກະກຽມແນະນຳ

- RESA ແມ່ນຫຍັງ?
- ສູນຂໍ້ມູນຕ່າງໆ
- ການເຂົ້າເຖິງນາຍจ้าง
- ຕະຫຼາດນັດວຽກ
- ການຝຶກອົບຮົມຄວາມຊຳນານ
- ການເຂົ້າເຖິງໂອກາດວຽກ
- ຂໍ້ມູນຄວາມພ້ອມຂອງວຽກ
- ການສ້າງເຄືອຂ່າຍ
- ການບໍລິການແນະນຳຕໍ່

# RESA ແມ່ນຫຍັງ?

- RESA ແມ່ນໂຄງການໃຫ້ບໍລິການຈ້າງງານໃໝ່ດ້ວຍການຂຽນປະຫວັດຄົນງານຕາມ WPRS ທີ່ໄດ້ປັບປຸງໃໝ່.
- ການປັບປຸງການຊ່ວຍເຫຼືອການຫວ່າງງານ 1993 (ໜັງສືໂຄງການເລກທີ 103-152) ໄດ້ດັດແກ້ລັດຖະບັນຍັດປະກັນສັງຄົມ (SSA)) ໃຫ້ຖືກເຊັນເປັນກົດໝາຍໃນວັນທີ 24 ພະຈິກ 1993.
- ພາຍໃຕ້ຂໍ້ຮຽກຮ້ອງຂອງ P.L. 103-152, ລັດຕ້ອງລະບຸບັນດາຜູ້ຮ້ອງຂໍ ທີ່ເປັນຜູ້ອາດຈະໝົດ UI (ການປະກັນການຫວ່າງງານ) ປົກກະຕິ ແລະຜູ້ທີ່ຈະໄດ້ຮັບຜົນປະໂຫຍດຈາກການບໍລິການຊ່ວຍເຫຼືອການຊອກຄົ້ນຫາວຽກ ເພື່ອເຮັດໃຫ້ເກີດການປ່ຽນແປງທີ່ສຳເລັດຜົນໄປສູ່ວຽກໃໝ່.

# RESA ແມ່ນຫຍັງ?

- ນອກຈາກນັ້ນ, TCA 50-7-302(a) ທີ່ໄດ້ມີຜົນບັງຄັບໃຊ້ໃນວັນທີ 12 ມີຖຸນາ 1995 ນັ້ນຮຽກຮ້ອງໃຫ້ບັນດາຜູ້ຮ້ອງຂໍທີ່ໄດ້ຮັບການຄັດເລືອກເພື່ອເຂົ້າຮ່ວມໃນການບໍລິການຈ້າງງານໃໝ່/ຂຽນໃບປະຫວັດ ນອກຈາກວ່າມີສາເຫດອັນດີຢູ່.
- ລັດຖະບັນຍັດການຟື້ນຕົວທາງເສດຖະກິດ ແລະການລົງທຶນຂອງອາເມຣິກາປີ 2009 (P.L. 111-5) ໄດ້ໃຫ້ທິດທາງ (ທຶນ) ເພື່ອປະເມີນໂຄງການຂອງລັດເຮົາ ແລະເຮັດການດັດແກ້ຕາມທີ່ຈຳເປັນ ເພື່ອປັບປຸງໂຄງການ WPRS-RESA. ໄດ້ເຮັດໃຫ້ໂຄງການ RESA ມີຄວາມທັນສະໄໝ ເພື່ອຕິດຕາມຜົນສຳເລັດຂອງຜູ້ເຂົ້າຮ່ວມຕາມທີ່ເຂົາເຈົ້າຊອກຫາການພັດທະນາຄວາມສາມາດໃນການຈ້າງງານ ແລະແຜນການຊອກຄົ້ນຫາວຽກຂອງເຂົາເຈົ້າ.
- ການບໍ່ດຳເນີນການໄປຕາມແຜນການຊອກຄົ້ນຫາວຽກຂອງທ່ານສາມາດມີຜົນຕໍ່ການຕັດຜົນປະໂຫຍດໃນການຫວ່າງງານຂອງທ່ານ, ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່ກັບຜູ້ສຳພາດ RESA ປະຈຳທ້ອງຖິ່ນຂອງທ່ານ.

# RESA ແມ່ນຫຍັງ?

- ດັ່ງນັ້ນ, ພວກເຮົາຢູ່ທີ່ນີ້ແລ້ວ....
- *ຊື່ໃໝ່, ເປົ້າໝາຍເດີມ.... . ເຮັດໃຫ້ການຫວ່າງງານກັບມາຈ້າງງານໃໝ່.*
- ຜູ້ຮ້ອງຂໍໄດ້ຖືກຈັດອັນດັບຄວາມສຳຄັນໂດຍການຊອກຄົ້ນຫາທີ່ໄດ້ຮັບເດດຢ່າງລະອຽດ ແລະຮູບແບບທາງສະຖິຕິເພື່ອກຳນົດບັນດາຜູ້ທີ່ອາດຈະໝົດເງິນປະໂຫຍດຈາກ UI ເຊັ່ນດຽວກັບຜູ້ທີ່ອາດຈະມີເງິນໄດ້ຮັບອັນດີ ເມື່ອໃຫ້ການບໍລິການທີ່ລະອຽດ.
- ຈາກນັ້ນ ກຸ່ມຂອງຜູ້ສະໝັກໄດ້ຮັບແຈ້ງໃຫ້ເຂົ້າຮ່ວມການກະກຽມແນະນຳ. ທຸກຫ້ອງການໃນທົ່ວລັດກວດກາເບິ່ງກຸ່ມຂອງຜູ້ສະໝັກ ເພື່ອໃຫ້ແນ່ໃຈວ່າຜູ້ເຂົ້າຮ່ວມປະຕິບັດຕາມກົດລະບຽບ.
- ທຸກໆຄົນທີ່ເໝາະສົມກັບຮູບແບບ R&S ອາດຈະບໍ່ຖືກເລືອກເຂົ້າ RESA.

# RESA ແມ່ນຫຍັງ?

- ຖ້າທ່ານກຳລັງພິຈາລະນາເລື່ອງນີ້ຢູ່, ຈາກນັ້ນ ທ່ານອາດຈະຖືກຄັດເລືອກເຂົ້າ RESA*. ດັ່ງນັ້ນ, ຕໍ່ໄປນີ້ແມ່ນຫຍັງ?
- ຂໍ້ມູນກ່ຽວກັບສິ່ງອຳນວຍຄວາມສະດວກແມ່ນມີໃຫ້ບໍລິການຢູ່ໃນສູນຊ່ວຍເຫຼືອອາຊີບຂອງລັດເທນເນັສຊີ ຫຼັງຈາກການນຳສະເໜີນີ້.
- ນອກຈາກນັ້ນ, ກອງປະຊຸມທີ່ທ່ານອາດຈະຖືກຮຽກຮ້ອງໃຫ້ພິຈາລະນາຕາມທີ່ໄດ້ກຳນົດໂດຍການສຳພາດ RESA ຂອງທ່ານແມ່ນມີເພື່ອໃຫ້ທ່ານເບິ່ງ. ຖ້າທ່ານມີຄຳຖາມອັນໃດ, ໃຫ້ຖາມກັບຜູ້ສຳພາດ RESA ປະຈຳທ້ອງຖິ່ນຂອງທ່ານໄດ້ເລີຍ.

*ໝາຍເຫດ: ການບໍລິການຂອງ RESA ຍັງໄດ້ປະກາດໄວ້ໃຫ້ກັບທຸກຄົນເບິ່ງຢູ່ໃນເວັບໄຊທ໌ຂອງກະຊວງແຮງງານຂອງລັດເທນເນັສຊີ (ເປັນການບັງຄັບ ແລະບໍ່ເປັນການບັງຄັບໃຫ້ເບິ່ງ).

# ສູນອຳນວຍຄວາມສະດວກ

- ສູນອຳນວຍຄວາມສະດວກຂອງພວກເຮົາມີຄອມພິວເຕີ ພ້ອມມີອິນເຕີເນັດໃຫ້ໃຊ້, ມີເຄື່ອງຈັກກອບປີ ແລະ ແຟັກ, ມີໂທລະສັບ, ແລະອຸປະກອນອຳນວຍຄວາມສ ດວກທາງດ້ານອາຊີບໃຫ້ໃຊ້.

- ຂໍ້ມູນຕະຫຼາດທ້ອງຖິ່ນມີຢູ່ໃນລະດັບທ້ອງຖິ່ນ, ລັດ, ປະເທດ, ແລະສາກົນ.

# ການເຂົ້າເຖິງນາຍຈ້າງ

- ສູນຊ່ວຍເຫຼືອອາຊີບເປີດໂອກາດອັນສະເພາະໃຫ້ຜູ້ຊອກຄົ້ນຫາວຽກເຂົ້າເຖິງນາຍຈ້າງທີ່ຈະຈ້າງຄົນຜ່ານຕະຫຼາດນັດວຽກໃນທ້ອງຖິ່ນ ແລະງານຈັດຈ້າງຢູ່ໃນສູນ, ບັນຊີລາຍການວຽກຂອງນາຍຈ້າງ ແລະການແນະນຳຕໍ່ໃຫ້.
- ຜູ້ຊອກຫາວຽກສາມາດໄດ້ຮັບຂໍ້ມູນກ່ຽວກັບນາຍຈ້າງໃນທ້ອງຖິ່ນ ເພື່ອກະກຽມການສຳພາດ ແລະດຳເນີນຂະບວນການຊອກຄົ້ນຫາວຽກໄດ້ດີກວ່າ.

# ຕະຫຼາດນັດວຽກ

- ສູນຊ່ວຍເຫຼືອດ້ານອາຊີບເປີດໂອກາດໃຫ້ນາຍຈ້າງຈັດຕະຫຼາດນັດວຽກຢູ່ໃນສະຖານທີ່ຂອງພວກເຮົາເປັນປົກກະຕິ.

- ພວກເຮົາຍັງໃຫ້ການສະໜັບສະໜູນ ແລະເຂົ້າຮ່ວມໃນຕະຫຼາດນັດວຽກຂະໜາດໃຫຍ່ຫຼາຍຄັ້ງ.*

** ກວດເຊັກເບິ່ງກັບສູນຊ່ວຍເຫຼືອອາຊີບປະຈຳທ້ອງຖິ່ນຂອງທ່ານ ສຳລັບການບໍລິການທີ່ມີຢູ່.*

# ການຝຶກຄວາມຊຳນານ

- ພະນັກງານສູນຊ່ວຍເຫຼືອ ອາຊີບສາມາດຊ່ວຍທ່ານໃນ ການຊອກຫາການຝຶກອົບຮົມ ຫຼືການສຶກສາທີ່ນຳພາໄປສູ່ ອາຊີບໃໝ່ ແລະດີກວ່າ.

# ການເຂົ້າເຖິງບັນຊີວຽກ

- ຜູ້ຊອກຫາວຽກມີການເຂົ້າເຖິງບັນຊີວຽກອັນຫຼວງຫຼາຍຢູ່ໃນທະນາຄານວຽກຢູ່ໃນຂັ້ນທ້ອງຖິ່ນ ແລະສູນກາງ.

- ຜູ້ຊ່ຽວຊານວຽກຍັງມີຄວາມພ້ອມໃຫ້ການຊ່ວຍເຫຼືອລູກຄ້າ ແລະໃຫ້ການແນະນຳຕໍ່ນາຍຈ້າງ.



# ຂໍ້ມູນຄວາມພ້ອມຕໍ່ວຽກ

- ສູນຊ່ວຍເຫຼືອອາຊີບໃຫ້ຂໍ້ມູນຄວາມພ້ອມຕໍ່ວຽກກ່ຽວກັບການຂຽນຊີວະປະຫວັດ, ການຊອກຄົ້ນຫາວຽກ, ຄວາມຊຳນານໃນການສຳພາດ, ອື່ນໆອີກຫຼາຍອັນ.

- ໃນແຕ່ລະຂັ້ນຕອນແມ່ນໄດ້ອອກແບບເພື່ອປັບປຸງໂອກາດຕໍ່ການຈ້າງງານຂອງຜູ້ຊອກຄົ້ນຫາວຽກ.

# ການສ້າງເຄືອຂ່າຍ

- ສູນຊ່ວຍເຫຼືອອາຊີບເປີດໂອກາດການສ້າງເຄືອຂ່າຍໃຫ້ກັບບັນດາຜູ້ຊອກຄົ້ນຫາວຽກ ເພື່ອເຊື່ອມຕໍ່ກັບຜູ້ຊອກຫາວຽກຄົນອື່ນໆ ແລະນາຍຈ້າງຢູ່ໃນພື້ນທີ່.

# ການບໍລິການແນະນຳຕໍ່ຂອງສູນຊ່ວຍເຫຼືອ ອາຊີບ

- ໂຄງການສຳລັບນັກຮົບເກົ່າ: ຜູ້ຕາງໜ້າຈະພົບກັບນັກຮົບເກົ່າເພື່ອ ສະໜອງການແລກປ່ຽນແຮງງານ ແລະການບໍລິການພິເສດກັບ ນັກຮົບເກົ່າ.
- ການໃຫ້ບໍລິການໃນການຟື້ນຟູ: ໂຄງການນີ້ຈະໃຫ້ການບໍລິການທີ່ຈຳ ເປັນຕໍ່ການຈ້າງງານກັບຜູ້ທີ່ມີສິດທີ່ເປັນຄົນພິການ.
- ການໃຫ້ບໍລິການຜູ້ອົບພະຍົບ ແລະຜູ້ລີ້ໄພ: ມີໃຫ້ພຽງແຕ່ສະເພາະຢູ່ ໃນເຂດເມືອງໃຫຍ່, ໂຄງການນີ້ຊ່ວຍເຫຼືອຜູ້ອົບພະຍົບ ແລະຜູ້ລີ້ໄພ ທີ່ກຳລັງຊອກວຽກເຮັດ.*
- ຄົນງານສູງອາຍຸ: ໂຄງການນີ້ຊ່ວຍຄົນງານທີ່ມີລາຍຮັບຕ່ຳທີ່ມີອາຍຸ ເກີນກວ່າ 40 ປີ ເຊິ່ງເປັນຜູ້ກຳລັງຊອກວຽກເຮັດ. ມີຈຳກັດ*

** ເຊັກເບິ່ງກັບສູນຊ່ວຍເຫຼືອອາຊີບ ໃນທ້ອງຖິ່ນຂອງທ່ານສຳລັບວຽກທີ່ມີຢູ່*

# ການກະກຽມແນະນຳ RESA

ຂໍສະແດງຄວາມຍິນດີ!
ທ່ານໄດ້ສຳເລັດການກະກຽມ
ແນະນຳ RESA ແລ້ວ.